# ພຣະຄຳພີ

## ຈົດໝາຍຂອງ ໂຢຮັນ
## ສະບັບທີ່ສາມ

ສະບັບ 2010

# ຈົດໝາຍຂອງ
# ໂຢຮັນ ສະບັບທີສາມ

1ຈາກ ຂ້າພະເຈົ້າຜູ້ເຖົ້າແກ່ຮຽນ ທ່ານຄາໂຢທີ່ຮັກ ຜູ້ຊຶ່ງຂ້າພະເຈົ້າຮັກເນື່ອງດ້ວຍຄວາມຈິງ.
2ທ່ານທີ່ຮັກເອີຍ, ຂ້າພະເຈົ້າອ້ອນວອນຂໍໃຫ້ທ່ານຈະເລີນດີຂຶ້ນໃນທຸກສິ່ງ ແລະມີສຸຂະພາບ
ແຂງແຮງເໝືອນຢ່າງຈິດວິນຍານຂອງທ່ານຈະເລີນດີຂຶ້ນຢູ່ນັ້ນ. 3ເພາະວ່າຂ້າພະເຈົ້າມີຄວາມ
ຍິນດີຫລາຍ ເມື່ອພວກພີ່ນ້ອງລາງຄົນໄດ້ມາແລະເປັນພະຍານເຖິງຄວາມສັດຈິງຂອງທ່ານ
ເໝືອນຢ່າງທ່ານໄດ້ປະຕິບັດຕາມຄວາມສັດຈິງນັ້ນ.
4ບໍ່ມີອັນໃດທີ່ເຮັດໃຫ້ຂ້າພະເຈົ້າຍິນດີຫລາຍກວ່ານີ້ ຄືທີ່ໄດ້ຍິນວ່າລູກທັງຫລາຍຂອງຂ້າພະ-
ເຈົ້າປະຕິບັດຕາມຄວາມສັດຈິງ.

## ຊົມເຊີຍຄາໂຢໃນການຕ້ອນຮັບແຂກ

5ທ່ານທີ່ຮັກເອີຍ, ເມື່ອທ່ານສະຫລະເຫື່ອແຮງໃຫ້ພວກພີ່ນ້ອງ ເປັນຕົ້ນວ່າໃຫ້ແກ່ແຂກທີ່ມາ
ເຮືອນກໍເປັນທີ່ສະແດງເຖິງຄວາມຈົງຮັກພັກດີຂອງທ່ານ. 6ເຂົາເຫລົ່ານັ້ນໄດ້ເປັນພະຍານຕໍ່ຄຣິ-
ສຕະຈັກໃນເລື່ອງຄວາມຮັກຂອງທ່ານ ຖ້າທ່ານຈະຊ່ອຍສົ່ງເຂົາເຫລົ່ານັ້ນໃຫ້ສົມກັບການປະຕິ-
ບັດພຣະເຈົ້າ ທ່ານກໍເຮັດດີ. 7ເພາະເຂົາເຫລົ່ານັ້ນໄດ້ອອກໄປເພາະເຫັນແກ່ພຣະນາມຂອງ
ພຣະອົງ ແລະບໍ່ໄດ້ຮັບສິ່ງໃດຈາກຄົນນອກ. 8ສັນນັ້ນ, ຝ່າຍເຮົາທັງຫລາຍຈຳເປັນຕ້ອງສະໜັບ-
ສະໜູນອູ້ມຊູຄົນຢ່າງນັ້ນເພື່ອພວກເຮົາຈະກາຍເປັນຜູ້ຮ່ວມງານກັນໃນຄວາມຈິງ.

## ການຂັດຂວາງຂອງດີໂອເທເຟ

9ຂ້າພະເຈົ້າໄດ້ຂຽນບາງສິ່ງບາງຢ່າງເຖິງຄຣິສຕະຈັກ ແຕ່ດີໂອເທເຟ ຜູ້ມັກຕັ້ງຕົວເປັນໃຫຍ່
ເໜືອໝູ່ກໍບໍ່ຍອມຮັບເຮົາ. 10ສັນນັ້ນ, ຖ້າຂ້າພະເຈົ້າມາ ຂ້າພະເຈົ້າຈະເຜີຍການທີ່ລາວເຮັດ ຄືທີ່
ລາວໄດ້ກ່າວໃສ່ຮ້າຍຕໍ່ຂ້າພະເຈົ້າດ້ວຍຄວາມບໍ່ມີແກ່ນສານ ແລະເທົ່ານັ້ນຍັງບໍ່ສົມໃຈ ຊໍ້າບໍ່ໜຳ
ລາວຍັງປະຕິເສດ, ບໍ່ຍອມຮັບຕ້ອນພີ່ນ້ອງເຫລົ່ານັ້ນ ແລ້ວຍັງກີດກັນຄົນທັງຫລາຍທີ່ຢາກຮັບ
ຕ້ອນເຂົາ ກັບທັງຕັດເຂົາອອກເສຍຈາກຄຣິສຕະຈັກ.

## ຄຳພະຍານອັນດີກ່ຽວເລື່ອງເດເມທີໂອ

11ທ່ານທີ່ຮັກເອີຍ, ຢ່າເອົາການຊົ່ວຮ້າຍເປັນແບບຢ່າງ ແຕ່ຈົ່ງເອົາການດີງາມ ຜູ້ທີ່ເຮັດການ
ດີ ກໍເປັນຂອງພຣະເຈົ້າ ຜູ້ທີ່ເຮັດການຊົ່ວກໍບໍ່ໄດ້ເຫັນພຣະເຈົ້າ.
12ສ່ວນເດເມທີໂອນັ້ນ ທຸກຄົນກໍເປັນພະຍານວ່າເພິ່ນເປັນຄົນດີ ແລະຄວາມຈິງເອງກໍເປັນ
ພະຍານ ຝ່າຍຂ້າພະເຈົ້າກໍເປັນພະຍານເໝືອນກັນ ແລະທ່ານຮູ້ແລ້ວວ່າຄຳພະຍານຂອງຂ້າ-
ພະເຈົ້າກໍເປັນຈິງ.

## ຄຳສະແດງຄວາມນັບຖືຕອນທ້າຍ

13ຂ້າພະເຈົ້າມີຂໍ້ຄວາມຫລາຍຂໍ້ທີ່ຈະຂຽນມາເຖິງທ່ານ ແຕ່ບໍ່ຢາກຂຽນດ້ວຍປາກກາແລະນໍ້າ-
ໝຶກ. 14ຂ້າພະເຈົ້າຫວັງວ່າຈະໄດ້ເຫັນທ່ານໃນໄວໆ ນີ້ແລະຈະໄດ້ເວົ້າກັນປາກຕໍ່ປາກ. 15ຂໍ

ສັນຕິສຸກຈົ່ງມີແກ່ທ່ານ ບັນດາສະຫາຍທາງນີ້ກໍຝາກຄວາມຄຶດເຖິງມາຍັງທ່ານ ຂໍທ່ານໄດ້ຝາກ
ຄວາມຄຶດເຖິງນີ້ແກ່ບັນດາສະຫາຍທາງພຸ້ນດ້ວຍອອກຊື່ຂອງທຸກຄົນ.

* * *

# ຕົວຫຍໍ້

| ຊື່ພຣະທຳ | ຕົວຫຍໍ້ | ຊື່ພຣະທຳ | ຕົວຫຍໍ້ |
|---|---|---|---|
| ປະຖົມມະການ | ປຖກ | ປັນຍາຈານ | ປຍຈ |
| ອົບພະຍົບ | ອພຍ | ຍອດເພງ | ຍດພ |
| ລະບຽບພວກເລວີ | ລລວ | ເອຊາຢາ | ອຊຢ |
| ຈົດເຊັນບັນຊີ | ຈຊບ | ເຢເຣມີຢາ | ພຄຄ |
| ພຣະບັນຍັດສອງ | ພບຍ | ເພງຄ່ຳຄວນ | ຢຣມ |
| ໂຢຊວຍ | ຢຊຍ | ເອເຊກີເອນ | ອສກ |
| ພວກຜູ້ປົກຄອງ | ຜປຄ | ດານີເອນ | ດນອ |
| ນາງຣຸດ | ນຣດ | ໂຮເຊອາ | ຮຊອ |
| 1 ຊາມູເອນ | 1ຊມອ | ໂຢເອນ | ຢອນ |
| 2 ຊາມູເອນ | 2ຊມອ | ອາໂມດ | ອມດ |
| 1 ກະສັດ | 1ກສດ | ໂອບາດີຢາ | ອບດ |
| 2 ກະສັດ | 2ກສດ | ໂຢນາ | ໂຢນ |
| 1 ຂ່າວຄາວ | 1ຂຄວ | ມີກາ | ມກາ |
| 2 ຂ່າວຄາວ | 2ຂຄວ | ນາຮູມ | ນຮມ |
| ເອັດຊະຣາ | ອສຣ | ຮາບາກຸກ | ຮບກ |
| ເນເຣມີຢາ | ນຣຢ | ເຊຟານີຢາ | ສຟຢ |
| ເອສະເທີ | ອຊທ | ຮັກກາຍ | ຮກຍ |
| ໂຢບ | ໂຢບ | ເສກາລີຢາ | ສກຢ |
| ເພງສັນລະເສີນ | ພສສ | ມາລາກີ | ມລກ |
| ສຸພາສິດ | ສພສ | | |

This 2010 edition of the Lao Bible has been revised and extended from the 1979 edition of the Lao Shorter Old Testament and 1973 edition of the Lao New Testament, as published by Thailand Bible Society in 1991.

Lao Bible Online – http://www.laobible.net.